ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****000*****

ບໍລິສັດ ອີທີແອລ ມະຫາຊົນ

ນະຄອນຫລວງວຽງຈັນ, ວັນທີ: 0 8 OCT 2012

# ບົດບັນທຶກ

## ກອງປະຊຸມສ່ອງແສງປະຈຳອາທິດທີ 40 ເດືອນ ຕຸລາ 2012.

ກ. ການຈັດຕັ້ງ:

- ສະຖານທີ່: ຫ້ອງປະຊຸມຊັ້ນ 4, ບໍລິສັດ ອີທີແອລ ມະຫາຊົນ.
- ເວລາ: ເປີດ 9:00 ໂມງ ແລະ ປິດ 12:20 ໂມງ, ວັນທີ 4 ຕຸລາ 2012.
- ຜູ້ເຂົ້າຮ່ວມ: ກຳມະການຜູ້ບໍລິຫານດ້ານເຕັກນິກ, ຄະນະພະແນກ ຈຳນວນ 14 ທ່ານ (ບັນຊີລາຍຊື່ຄັດຕິດ ມາພ້ອມນີ້).
- ການຈັດຕັ້ງທີ່ຈັດປະຊຸມ: ກຳມະການຜູ້ບໍລິຫານດ້ານເຕັກນິກ.

ຂ. ຈຸດປະສົງ: ຮັບລາຍງານສ່ອງແສງປະຈຳອາທິດທີ 40 ຂອງເດືອນ 10 ປີ 2012 ຈາກພະແນກການ ແລະ ປຶກສາຫາລືກ່ຽວກັບ ບັນຫາທີ່ ພົ້ນເດັ່ນ ແລະ ຄວນປະຕິບັດໃນປະຈຸບັນ.

ຄ. ການດຳເນີນກອງປະຊຸມ:
ທ່ານ ບັນຈົງ ເພັດສີແດງ, ປະທານກອງປະຊຸມໄດ້ກ່າວເປີດກອງປະຊຸມ ແລະ ໄດ້ສະຫລຸບບັນຫາຜ່ານມາທີ່ໄດ້ ຖືກແກ້ໄຂ ແລະ ຍັງຄົງຄ້າງ.

໑. ຂໍ້ສະເໜີຂອງແຕ່ລະພະແນກ:

1. ພະແນກ ກວດກາ:

- ສະເໜີ ເລື່ອງການໂທລົງທະບຽນໂທລະສັບ ເປັນໄປໄດ້ແມ່ນບໍ່ຢາກໃຫ້ ພະນັກງານພາຍໃນໂທ ເພາະ ວ່າມັນມີຜົນກະທົບຕໍ່ກັບໜ້າທີ່ວຽກງານ ໃຫ້ພະແນກ ທີ່ກ່ຽວຂ້ອງ ຄົ້ນຄ້ວາຮ່ວມກັນເບິ່ງວ່າຈະເຮັດແນວ ໃດ. ເພາະວ່າບໍ່ສາມາດຮັບປະກັນຄຸນນະພາບກ່ຽວກັບຂໍ້ມູນຂອງລູກຄ້າ ຢາກໃຫ້ຊອກຫາວິທີການອື່ນ ໄດ້ບໍ? ວ່າຈ້າງ ຫລື ໃຫ້ຜູ້ຮັບເໝົາມາເຮັດແທນ.
- ມອບໃຫ້ພະແນກ ການຕະຫລາດ ຄົ້ນຄວ້າສັງລວມເບິ່ງວ່າຈະຊອກຫາວິທີການແກ້ໄຂບັນຫາແນວໃດ ແລ້ວ ສັງລວມ ເບີໂທລະສັບມືຖືທີ່ໂທຖາມຂໍ້ມູນນຳລູກຄ້າໄດ້ເທົ່າໃດ ແລະ ຍັງເຫລືອເທົ່າໃດ.
- ສະເໜີ ຢາກໃຫ້ ຈັດຕັ້ງເປັນໜ່ວຍງານຮັບຜິດຊອບວຽກງານລະດົມໂຄສະນາການຂາຍ ໂດຍສະເພາະ ເລີຍ ແລະ ໃຫ້ມີການສະຫລຸບຕີລາຄາ ມີແບບແຜນການຈັດຕັ້ງປະຕິບັດຢ່າງຄັກແນ່.

2. ພະແນກ ນິຕິກຳ:

- ສະເໜີ ຢາກໃຫ້ ພາກສ່ວນ ການຕະຫລາດ ແລະ ປ່ອງບໍລິການ ແຍກອອກເປັນແຕ່ລະພາກສ່ວນ, ພາກ ສ່ວນ ການຕະຫລາດ ເປັນຜູ້ວາງແຜນ ແລະ ພາກສ່ວນ ບໍລິການ ເປັນຜູ້ປະຕິບັດ ມັນຈິ່ງສອດ ຄ່ອງກັບວຽກງານຕົວຈິງ.

3. ພະແນກ ການຕະຫລາດ:

- ຢາກໃຫ້ ຈັດຕັ້ງ ເປັນລະບົບ ມີການຄຸ້ມຄອງຢ່າງຄັກແນ່ ສຳລັບວຽກງານລະດົມໂຄສະນາການຂາຍ

ເພາະວ່າທີ່ຜ່ານມາ ວຽກງານດັ່ງກ່າວ ແມ່ນມີປະສິດທິພາບຫລາຍ ສາມາດສ້າງລາຍຮັບໃຫ້ ອທອ ເຮົາໄດ້ຫລາຍພໍສົມຄວນ. ອີກຢ່າງໜຶ່ງ ເຮັດໃຫ້ລູກຄ້າຮັບຮູ້ ແລະ ເຂົ້າໃຈຜະລິດຕະພັນຂອງພວກເຮົາຢ່າງເລິກເຊິ່ງ.

4. ພະແນກ ສາຍສົ່ງ:

- ສະເໜີ ຢາກໃຫ້ ມີຫ້ອງ ສໍາລັບ ວິຊາການ 2 ຄົນ ປະຈໍາຢູ່ສູນກາງ ເຮືອນຈັກໄຟຟ້າ ເພື່ອຮັບຜິດຊອບວຽກງານນີ້ໂດຍກົງ.

ງ. ຜົນຂອງກອງປະຊຸມ:

1. ໃຫ້ພະແນກ ການເງິນ ກວດກາເບິ່ງລະອຽດຄືນວ່າແຕ່ລະແຂວງມີໜີ້ສິນຫລາຍປານໃດກ່ອນ ສໍາລັບການເບີກຈ່າຍເງິນໃຫ້ແກ່ບໍລິສັດຮັບເໝົາກໍ່ສ້າງຢູ່ຕ່າງແຂວງ ເພາະວ່າຖ້າຕ່າງແຂວງເບີກຈ່າຍເງິນເອງແມ່ນມັນບໍ່ສອດຄ່ອງຕາມກົດລະບຽບ ຂອງ ອທອ ວາງອອກ.
2. ເລື່ອງການຈັດຊື້ອຸປະກອນ ແມ່ນໃຫ້ທົດລອງ ເອົາລະບົບ ISC ຖ້າວ່າອຸປະກອນດັ່ງກ່າວໃຊ້ໄດ້ແມ່ນໃຫ້ປະຕິ ບັດເລີຍ ບໍ່ຈໍາເປັນຕ້ອງຊື້ເຄື່ອງໃໝ່ເພາະຈະເປັນການສິ້ນເປືອງງົບປະມານລ້າໆ.
3. ສໍາລັບການຂຶ້ນເງິນເດືອນແມ່ນບໍ່ສາມາດປະຕິບັດໄດ້ ມີແຕ່ຈະເພີ່ມຕົວດັດສະນີ ພະແນກ ນິຕິກໍາ ໄດ້ຄົ້ນຄ້ວາກົດລະບຽບໃໝ່ໄດ້ມີການດັດແກ້ແລ້ວ ໂດຍສະເພາະດັດສະນີ, ເນື່ອງຈາກວ່າເຮົາເປັນ ອທອ ແລ້ວແຕ່ວ່າເຮົາຍັງໃຊ້ລະບຽບເກົ່າຢູ່.

- ສໍາລັບກົດລະບຽບໃໝ່ ແມ່ນມີ 6 ສະບັບ ຖ້າວ່າຂໍ້ໃດເຫັນວ່າຍັງບໍ່ເໝາະສົມໃຊ້ ແມ່ນບໍ່ໃຫ້ນໍາໃຊ້ ເພາະວ່າທີ່ຜ່ານມາແມ່ນເກື້ອກູນກັນຫລາຍ (ສໍາລັບບັນຫານີ້ແມ່ນລໍຖ້າການຕັດສິນຈາກຜູ້ບໍລິຫານ ອທອ).

4. ກ່ຽວກັບໜີ້ສິນ ຂອງເບີໂທລະສັບ inhouse ຂອງພະນັກງານ ແມ່ນກໍາລັງປະຕິບັດຢູ່ໃກ້ຈະສໍາເລັດແລ້ວ.
5. ສໍາລັບການໄປແຂ່ງຂັນກິລາມິດຕະພາບກັບ ບໍລິສັດ CAT TELECOM ແມ່ນມອບໃຫ້ຄະນະກໍາມະການກິລາເປັນຜູ້ຈັດຕັ້ງປະຕິບັດ.

- ໄດ້ມີການປຶກສາຫາລືກັນແລ້ວ ແລະ ຕອບຈໍານວນພົນ ພ້ອມທັງ ເວລາ ທີ່ຈະເດີນທາງໄປ.

6. ໃຫ້ ພະແນກ ບໍລິຫານ, ບັນຊີ ແລະ ການເງິນເບິ່ງຄືນ ເລື່ອງນະໂຍບາຍຕ່າງໆວ່າມັນເໝາະສົມແລ້ວບໍ່ ແລະມັນຄ້າງຄາຢູ່ຂອດໃດ ແມ່ນໃຫ້ແກ້ຈຸດນັ້ນ ບໍ່ໃຫ້ມັນມີຜົນກະທົບຕໍ່ ບໍລິສັດ ຫລັງຈາກນັ້ນແມ່ນໃຫ້ສະເໜີຫາ ກໍາມະການຜູ້ບໍລິຫານ.
7. ສໍາລັບການປະຊຸມສ່ອງແສງປະຈໍາອາທິດທີ່ຕ່າງແຂວງຢາກມີສ່ວນຮ່ວມນັ້ນ (ໂດຍການໃຊ້ລະບົບ Vedio conference) ໄດ້ຕົກລົງເຫັນດີ ແລະ ໃຫ້ເລີ່ມປະຕິບັດໃນ ວັນທີ 1/11/2012 ເປັນຕົ້ນໄປ.
8. ແມ່ນໄດ້ດໍາເນີນການຈັດຕັ້ງປະຕິບັດແລ້ວສໍາລັບລະບົບ 3G Package M1 ແບບ Mannual unlimited ແມ່ນເຮັດໂຕ Mannual ກ່ອນ.
9. ສໍາລັບລະບົບ PRBT ແມ່ນໄດ້ປຶກສາກັບ ກໍາມະການຜູ້ບໍລິຫານດ້ານເຕັກນິກ ແລ້ວໃຫ້ນໍາໃຊ້ລະບົບ Mannual ກ່ອນ.
10. ສໍາລັບການບໍລິການດ້ານຫລິ້ນເກມ ແມ່ນໄດ້ດໍາເນີນການແລ້ວ ຢູ່ໃນຂັ້ນຕອນການຕິດຕັ້ງທົດລອງຢູ່.
11. ມອບໃຫ້ ຄະນະກໍາມະການຄຸ້ມຄອງ ນໍາໄປຈັດຕັ້ງປະຕິບັດ ກ່ຽວກັບການປັບປຸງລະບຽບການຄຸ້ມຄອງຄັງເງິນ ສະຫວັດດີການ ( ບໍາເນັດ, ບໍານານ ) ( ທ່ານ ສົມແກ້ວ ທານາວົງ ໄປພົວພັນກັບ ຄະນະກໍາມະການຜູ້ບໍລິຫານ ).
12. ມອບໃຫ້ ພະແນກ ການຕະຫລາດ ໄປປຶກສາຫາລື ກັບ ກໍາມະການຜູ້ບໍລິຫານດ້ານທຸລະກິດ ກ່ຽວກັບການຈັດຕັ້ງໜ່ວຍງານ ແນວຄິດລະດົມ ໂຄສະນາການຂາຍ ແບບມືອາຊີບ ໃຫ້ມັນມີແບບແຜນ, ເປັນ

ລະບົບ, ມີການຄຸ້ມຄອງ ແລະ ມີປະສິດທິພາບ ຈຸດປະສົງເປົ້າໝາຍເຮັດແນວໃດລາຍຮັບເຮົາຈະເພີ່ມ ແລະ ລາຍຈ່າຍຈະລຸດລົງ.

13. ຢາກໃຫ້ ພະແນກ ການທີ່ກ່ຽວຂ້ອງ ຄິດນຳກັນເບິ່ງວ່າຈະເຮັດແນວໃດ ໃຫ້ລາຍຮັບຂອງພວກເຮົາເພີ່ມຂື້ນ ແລະ ລາຍຈ່າຍຈະລຸດລົງ.
14. ມອບໃຫ້ ພະແນກ ບໍລິຫານ ເຮັດແຈ້ງການ ຫາ ບັນດາແຂວງ ໃນການບຳລຸງຮັກສາເຄື່ອງມືອຸປະກອນຕ່າງໆ ເພື່ອຕ້ອນຮັບກອງປະຊຸມໃຫ່ຍທີ່ຈະມາເຖິງ.
15. ໃຫ້ ພະແນກ ໂທລະສັບຕັ້ງໂຕະ-ອິນເຕີເນັດ ສົ່ງພະນັກງານວິຊາການ ໄປຕິດຕາມເບິ່ງວ່າມີທູດລັດເຊຍຢູ່ໂຮງແຮມດອນຈັນ ຕ້ອງການໄຊ້ບໍລິການເບີໂທລະສັບຂອງພວກເຮົາ ຈຳນວນ 03 ເບີ.

ຈ. ວາລະສຸດທ້າຍຂອງກອງປະຊຸມ

ສຳລັບວຽກງານໃນໄລຍະຜ່ານມາ ແມ່ນເຫັນດີເປັນເອກະພາບກັນດ້ານແນວຄິດການປະຕິບັດວຽກງານຕ່າງໆ ຢ່າງໃດກໍ່ຕາມ ວຽກງານທຸກຢ່າງ ແມ່ນມີອັນໄປ ແລະ ອັນບໍ່ໄປ ເບິ່ງແລ້ວ ໃນຊ່ວງໄລຍະນີ້ແມ່ນເປັນໄລຍະທີ່ຫຍຸ້ງຍາກຫລາຍໂດຍສະເພາະເລື່ອງເງິນຄຳ ແລະ ເຮັດແນວໃດເຮົາຈະຫາເງິນໄດ້ ແລະ ເລື່ອງການໃຊ້ຈ່າຍແມ່ນປະຢັດໄດ້ຢາກໃຫ້ປະຢັດ, ແກ້ໄຂບັນຫາຮ່ວມກັນ ແລະ ນຳເອົາບັນຫາດັ່ງກ່າວໄປຄົ້ນຄວ້າຈັດຕັ້ງປະຕິບັດ ແລະ ຊອກຫາທາງອອກຊ່ວຍກັນ.

ປະທານກອງປະຊຸມ

ບັນຈົງ ເພັດສີແດງ

ຜູ້ບັນທຶກ

ທ. ໄພສົມບູນ